| ຂໍ້ມູນທີ່ໄດ້ຮັບຈາກຂະແໜງການທີ່ກ່ຽວຂ້ອງ | |
|---|---|
| ຊື່ໃບອະນຸຍາດ | ໃບຢັ້ງຢືນການຈົດທະບຽນເຄື່ອງໝາຍການຄ້າ |
| **ປະເພດເອກະສານ** | ໃບຢັ້ງຢືນ |
| **ວັນທີແກ້ໄຂຂໍ້ມູນລ່າສຸດ** | 31.12.2017 |
| **ພາກສ່ວນຮັບຜິດຊອບ** | ກົມຊັບສິນທາງປັນຍາ |
| **ຜູ້ທີ່ສາມາດຍື່ນຂໍເອກະສານ** | ຜູ້ເປັນເຈົ້າຂອງ ເຄື່ອງໝາຍການຄ້າ ຊຶ່ງໝາຍເຖິງສັນຍາລັກໃດໜຶ່ງ ຫຼື ຫຼາຍສັນຍາລັກລວມກັນທີ່ສາມາດຈຳແນກສິນຄ້າ ຫລື ການບໍລິການນີ້ກັບສິນຄ້າ ແລະ ການບໍລິການອື່ນ ແລະ ເປັນຜູ້ທີ່ມີຈຸດປະສົງຈະໄດ້ຮັບການປົກປ້ອງເຄື່ອງໝາຍການຄ້າດັ່ງກ່າວໃນຂອບເຂດ ສປປ ລາວ |
| **ເງື່ອນໄຂໃນການຂໍເອກະສານ** | ບຸກຄົນທີ່ມີສິດໄດ້ຮັບການປົກປ້ອງສິດ ມີດັ່ງນີ້: (i) ເປັນພົນລະເມືອງລາວ ຫລື ຜູ້ທີ່ມີທີ່ຢູ່ອາໄສ ຢູ່ ສປປ ລາວ ຫລື ນິຕິບຸກຄົນ ຫລື ການຈັດຕັ້ງທີ່ສ້າງຕັ້ງຂື້ນ ພາຍໃຕ້ກົດໝາຍຂອງ ສປປ ລາວ; (ii) ບຸກຄົນທີ່ມີສັນຊາດ ຫລື ມີທີ່ຢູ່ອາໄສຢູ່ ປະເທດໃດໜຶ່ງ ຊຶ່ງເປັນພາຄີຂອງສົນທິສັນຍາປາຣີ ຫລື ຂໍ້ຕົກລົງສາກົນອື່ນ ກ່ຽວກັບ ການປົກປ້ອງຊັບສິນອຸດສາຫະກຳ ທີ່ ສປປ ລາວ ເຂົ້າຮ່ວມເປັນພາຄີ; (iii) ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງ ທີ່ມີສະຖານທີ່ດຳເນີນການຄ້າ ແລະ ອຸດສາຫະກຳຕົວຈິງ ແລະ ມີປະສິດທິຜົນ ຢູ່ໃນອານາເຂດຂອງປະເທດໃດໜຶ່ງ ທີ່ເປັນພາຄີຂອງ ສົນທິສັນຍາປາຣີ ຫລື ຂໍ້ຕົກລົງສາກົນອື່ນ ກ່ຽວກັບ ການປົກປ້ອງຊັບສິນອຸດສາຫະກຳ ທີ່ ສປປ ລາວ ເຂົ້າຮ່ວມເປັນພາຄີເງື່ອນໄຂຂອງເຄື່ອງໝາຍທີ່ຈະໄດ້ຮັບໃບຢັ້ງຢືນ ມີດັ່ງນີ້: (i) ເຄື່ອງໝາຍ ອາດເປັນສັນຍາລັກໃດໜຶ່ງ ຫລື ຫລາຍສັນຍາລັກລວມກັນ ທີ່ສາມາດຈຳແນກສິນຄ້າ ຫລື ການບໍລິການ ຂອງບໍລິສັດໃດໜຶ່ງ ແຕກຕ່າງຈາກບໍລິສັດອື່ນ; (ii) ເຄື່ອງໝາຍ ທີ່ບໍ່ຄືກັນກັບເຄື່ອງໝາຍການຄ້າ, ເຄື່ອງໝາຍທີ່ມີຊື່ສຽງ ຫລື ຖິ່ນກຳເນີດທີ່ໄດ້ຈົດທະບຽນກ່ອນແລ້ວ ສຳລັບ ສິນຄ້າ ຫລື ການບໍລິການ ອັນດຽວກັນ; (iii) ເຄື່ອງໝາຍ ທີ່ບໍ່ຄ້າຍຄືກັນ ກັບ ເຄື່ອງໝາຍການຄ້າ ທີ່ໄດ້ຈົດທະບຽນກ່ອນໜ້ານີ້ ຫລື ເຄື່ອງໝາຍທີ່ມີຊື່ສຽງ ສຳລັບ ສິນຄ້າ ຫລື ການບໍລິການ ອັນດຽວກັນ, ຄ້າຍຄືກັນ ຫລື ກ່ຽວຂ້ອງກັນ ຊຶ່ງການນຳໃຊ້ເຄື່ອງໝາຍດັ່ງກ່າວ ອາດຈະພາໃຫ້ເກີດຄວາມສັບສົນ ເຖິງແຫລ່ງທີ່ມາຂອງສິນຄ້າ ຫລື ການບໍລິການ ຫລື ສ້າງຄວາມເຂົ້າໃຈຜິດວ່າ ເຄື່ອງໝາຍນັ້ນ ກ່ຽວຂ້ອງກັນ ຫລື ກ່ຽວພັນກັບຜູ້ອື່ນ; (iv) ເຄື່ອງໝາຍທີ່ບໍ່ມີລັກສະນະຕ້ອງຫ້າມ ຕາມມາດຕາ 23 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ |

| ກົດໝາຍ ແລະ ນິຕິກຳອື່ນໆ ທີ່ກ່ຽວຂ້ອງ | | | |
|---|---|---|---|
| **ຊື່** | **ເລກທີ** | **ລົງວັນທີ** | **ໝາຍເຫດ** |
| ກົດໝາຍວ່າດ້ວຍຊັບສິນທາງປັນຍາ (ສະບັບປັບປຸງ 2017) | 38/ສພຊ | 15.11.2017 | |
| ຂໍ້ຕົກລົງ ວ່າດ້ວຍເຄື່ອງໝາຍການຄ້າ ແລະ ຊື່ການຄ້າ | 2822/ກວຕ | 17.12.2019 | |

| ໃບອະນຸຍາດດຳເນີນການ ຫລື ເອກະສານທີ່ຈຳເປັນ ຫລື ຕິດພັນ | | |
|---|---|---|
| **ຊື່** | **ປະເພດ** | **ໝາຍເຫດ** |
| ${SUPPORT_NAME} | ${SUPPORT_TYPE} | ${SUPPORT_COMMENT} |

| ເອກະສານທີ່ຕ້ອງປະກອບສຳລັບການຍື່ນຂໍເອກະສານ | | |
|---|---|---|
| **ຊື່ເອກະສານ** | **ປະເພດເອກະສານ** | **ຕົວຢ່າງເອກະສານ** |
| ${ATTACHMENT_NAME} | ${ATTACHMENT_TYPE} | ${ATTACHMENT_FILE} |

| ເອກະສານທີ່ຕ້ອງປະກອບສຳລັບການຕໍ່ອາຍຸ | | |
|---|---|---|
| ຊື່ເອກະສານ | ປະເພດເອກະສານ | ຕົວຢ່າງເອກະສານ |
| ${ATTACHMENT_NAME_RENEW} | ${ATTACHMENT_TYPE_RENEW} | ${ATTACHMENT_FILE_RENEW} |

| ຮູບແບບການຍື່ນເອກະສານ | | |
|---|---|---|
| **ການຍື່ນເອກະສານ** | ຢູ່ທີ່ຫ້ອງການເຈົ້າໜ້າທີ່ | |
| **ທີ່ຢູ່ຂອງພາກສ່ວນທີ່ຮັບຜິດຊອບ** | ກົມຊັບສິນທາງປັນຍາ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ | |
| **ໄລຍະເວລາໃນການ ພິຈາລະນາຄຳຮ້ອງ (ວັນ)** | 300 | |

| ການຕໍ່ອາຍຸເອກະສານ | |
|---|---|
| **ເອກະສານມີກຳນົດອາຍຸ ຫຼື ບໍ່?** | **ໃບອະນຸຍາດມີອາຍຸການນຳໃຊ້ຈັກເດືອນ?** |
| ມີ | 120 |
| **ຂັ້ນຕອນ ແລະ ເງື່ອນໄຂສຳລັບການຕໍ່ອາຍຸເອກະສານ** | |

| | |
|---|---|
| **ຂັ້ນຕອນ ແລະ ເງື່ອນໄຂສຳລັບການຕໍ່ອາຍຸໃບອະນຸຍາດ** | ເມື່ອຄົບກຳນົດແລ້ວ, ສາມາດຕໍ່ອາຍຸ ເທື່ອລະ 10 ປີ ໄດ້ຕະຫລອດໄປ; ພາຍໃຕ້ເງື່ອນໄຂທີ່ວ່າ ເພື່ອຮັກສາອາຍຸການປົກປ້ອງນັ້ນ, ເຈົ້າຂອງເຄື່ອງໝາຍການຄ້າ ຕ້ອງຈ່າຍຄ່າທຳນຽມລ່ວງໜ້າ ເທື່ອລະ 10 ປີ |

| **ຄ່າທຳນຽມສຳລັບການຍື່ນຂໍເອກະສານ** | | | | |
|---|---|---|---|---|
| **ມີຄ່າໃບຄຳຮ້ອງ ຫຼື ບໍ່?** | **ຄ່າບໍລິການ** | **ຄ່າທຳນຽມທາງວິຊາການ** | **ຄ່າແບບຟອມ ຄຳຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ມີ | 300000.00 | 800000.00 | 20000.00 | 1120000.00 |
| **Comments** | ອີງຕາມ ຄຳແນະນຳຂອງເຈົ້າໜ້າທີ່ | | | |
| **ຄ່າບໍລິການເພີ່ມເຕີມ** | | | | |
| ລາຍການຄ່າໃຊ້ຈ່າຍອື່ນໆ | | | | |
| ບໍ່ມີ | 0.00 | 0.00 | 0.00 | 0.00 |
| **ຄຳ ເຫັນຄ່າ ທຳ ນຽມເພີ່ມເຕີມ** | | | | |

| **ຄ່າທຳນຽມສຳລັບການຂໍຕໍ່ອາຍຸເອກະສານ** | | | | |
|---|---|---|---|---|
| **ມີຄ່າຕໍ່ອາຍຸເອກະສານ ຫຼື ບໍ່?** | **ຄ່າບໍລິການ** | **ຄ່າທຳນຽມທາງວິຊາການ** | **ຄ່າໃບຄຳຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ມີ | 300000.00 | 800000.00 | 20000.00 | 1120000.00 |
| **ຄຳເຫັນ** | ອີງຕາມ ຄຳແນະນຳຂອງເຈົ້າໜ້າທີ່ | | | |
| ຄ່າໃຊ້ຈ່າຍອື່ນໆ | | | | |
| ລາຍການຄ່າໃຊ້ຈ່າຍອື່ນໆ | | | | |
| ບໍ່ມີ | 0.00 | 0.00 | 0.00 | 0.00 |
| **ຄຳ ເຫັນກ່ຽວກັບຄ່າ ທຳ ນຽມຕໍ່ອາຍຸເພີ່ມເຕີມ** | | | | |